ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ
****

ບໍລິສັດ ລາວອາໂກຣເທັກ ມະຫາຊົນ
LAO AGROTECH PUBLIC COMPANY
ບ້ານ ວັດໄຕນ້ອຍທົ່ງ, ເມືອງ ສີໂຄດຕະບອງ,
ນະຄອນຫຼວງວຽງຈັນ, ສປປ ລາວ
ໂທລະສັບ:(856-21)520715,ແຟັກ:(856-21)256259

ເລກທີ: 03.3...../ລອທ

ນະຄອນຫຼວງວຽງຈັນ, 31 MAR 2020

ແຈ້ງການ

ຮຽນ : ທ່ານ ຫົວໜ້າສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ທີ່ນັບຖື,
ທ່ານ ຜູ້ອຳນວຍການໃຫຍ່ຕະຫຼາດຫລັກຊັບລາວ ຈຳກັດ ທີ່ນັບຖື,
ທ່ານ ຜູ້ຖືຮຸ້ນ ຂອງ ບໍລິສັດ ລາວອາໂກຣເທັກ ມະຫາຊົນ ທີ່ນັບຖື,

ເລື່ອງ: ການປະຕິບັດວຽກງານຂອງພະນັກງານທຸກພາກສ່ວນຂອງບໍລິສັດ ໃນໄລຍະການລະບາດ ຂອງພະຍາດໂຄວິດ 2019.

- ອີງຕາມຄຳສັ່ງວ່າດ້ວຍການເພີ່ມທະວີມາດຕະການສະກັດກັ້ນ, ກັນການລະບາດ, ຄວບຄຸມ ແລະ ກຽມຄວາມພ້ອມຮອບດ້ານ ເພື່ອຕ້ານພະຍາດ COVID-19 ເລກທີ 06/ນຍ, ລົງວັນທີ 29 ມີນາ 2020

ບໍລິສັດ ລາວອາໂກຣເທັກ ມະຫາຊົນ ("ບໍລິສັດ") ຂໍແຈ້ງມາຍັງທ່ານຊາບວ່າ ໃນລະຫວ່າງວັນທີ 01-19 ເມສາ 2020 ພະນັກງານທຸກພາກສ່ວນ ຂອງບໍລິສັດຈະໄດ້ມີການຢຸດເຮັດວຽກຢູ່ບໍລິສັດ ປ່ຽນເປັນການເຮັດວຽກຢູ່ເຮືອນ ຫຼື ທີ່ພັກອາໄສ ໂດຍຜ່ານລະບົບການສື່ສານ ແລະ ເຄືອຄ່າຍອິນເຕີເນັດ ເຊັ່ນ: ໂທລະສັບ, ອີເມວ, ແອັບພິເຄເຊິນຕ່າງໆ, ຍົກເວັ້ນຜູ້ທີ່ໄດ້ຮັບມອບໝາຍປ່ຽນຜ່ຽນໃຫ້ປະຈຳການ, ເພື່ອປະຕິບັດຕາມແຈ້ງການຂອງລັດຖະບານ ແລະ ເພື່ອເປັນການຮ່ວມມືໃນການປ້ອງກັນການແຜ່ລະບາດຂອງພະຍາດໂຄວິດ 2019.

ດັ່ງນັ້ນ, ຈຶ່ງແຈ້ງຍັງທ່ານເພື່ອຮັບຊາບ

ດ້ວຍຄວາມເຄົາລົບ ແລະ ນັບຖືຢ່າງສູງ
ຜູ້ອຳນວຍການໃຫຍ່

ບໍລິສັດ ລາວ ອາໂກຣເທັກ ມະຫາຊົນ Lao Agro Tech Public Company

ອຸດົມ ແກ້ວທະວົງ
Oudom KEOTHAVONG